*Souphanouvong University Journal of Multidisciplinary Research and Development*
*2026, Vol. 12, No. 03, 33-40*
*https://doi.org/10.69692/SUJMRD120333*

# Factors Related to the Economic Self-Reliance of People in Pakxeng District, Luang Prabang Province

**Soutthavone Sioudomphan[1*], Metkham Saleumsack[2], Somyot Layaseng[3]**
*Department of Economics Faculty of Economics and Tourism Souphanouvong University, Lao PDR*

**[*]Correspondence:**
*Soutthavone Sioudomphan,*
*Economic Department,*
*Tel: 020 22223325,*
*E-mail vphanthouly@gmail.com*
*[1] Faculty of Economics and Tourism, Souphanouvong University*

***Article Info:***
***Submitted: May 08, 2026***
***Revised: June 03, 2026***
***Accepted: June 24, 2026***

**Abstract**

This study aims to 1) study the overall situation of economic self-reliance and 2) analyze the relationship between factors that affect the ability of people to be economically self-reliant in PakXeng district, Luang Prabang province. This study used a quantitative research method, targeting the people of PakXeng district in Luang Prabang province among 203 household. Data was collected using a questionnaire, and basic statistics were applied to determine percentages, sums, and frequency distributions, along with correlation analysis (Chi-Square) for data analysis.

The study found that people have stable, durable, and safe housing; self-reliance in income expenditure and family savings can be achieved at 56.29%; and there is no debt from borrowing. At the same time, there are many family assets that can help families be self-reliant, such as land for livelihood and livestock. Most people do not keep a family income-expenditure account because they still lack financial knowledge and experience and have never done it before. Family economic promotion activities that can help families be self-reliant include home gardening, animal husbandry activities, activities to promote secondary employment, and activities to collect non-timber forest products. For factors related to the economic self-reliance of people in the PakXeng district, Luang Prabang province, it was found that factors related to family savings, home gardening activities, animal husbandry activities, cost of living, and natural disasters were statistically significant at the 0.01 level; factors related to the number of members who can generate income, housing security, highest level of education of family members, keeping a family income-expenditure account, and non-timber forest product collection activities were statistically significant at the 0.05 level; and the number of family members was related to the economic self-reliance of people with a statistical significance level of 0.1.

**Keywords:** ***Factors related, self-reliance, economy***

## 1. ພາກສະເໜີ

ເມືອງປາກແຊງ ແມ່ນຕັ້ງຢູ່ທິດຕາເວັນອອກສ່ຽງເໜືອຂອງແຂວງຫຼວງພະບາງ ແລະ ເປັນ 2 ໃນ 4 ເມືອງທີ່ທຸກຍາກຂອງແຂວງຫຼວງພະບາງ ຫ່າງຈາກເທດສະບານແຂວງຫຼວງພະບາງປະມານ 84 ກິໂລແມັດ, ມີສຳນັກເມືອງຕັ້ງຢູ່ປາກນ້ຳແຊງປ່ອງໃສ່ນ້ຳເຊືອງ, ເນື້ອທີ່ສ່ວນໃຫຍ່ເປັນພູສູງຊັນກວມ 91% ມີເສັ້ນທາງເລກທີ່ 2505 ຍາວ 73 ກິໂລແມັດຜ່ານ,ມີເນື້ອທີ່ທັງໝົດປະມານ 1,663,932 km$^2$, ລະດັບຄວາມໜ້າແໜ້ນຂອງພົນລະເມືອງ 14 ຄົນ/km$^2$, ເຊິ່ງມີເຂດແດນຕິດຈອດບັນດາເມືອງດັ່ງນີ້: ທິດເໜືອຕິດກັບ ເມືອງງອຍ, ທິດໃຕ້ຕິດກັບ ເມືອງໂພນໄຊ, ທິດຕາເວັນອອກຕິດກັບເມືອງວຽງຄຳ ແລະ ທິດຕາເວັນຕົກຕິດກັບເມືອງ ວຽງຄຳ ແລະ ເມືອງປາກອູ. ປະກອບມີ 8 ກຸ່ມ

*Copyright © 2026 by the Authors. Published by Souphanouvong University. This is an open access article under the CC BY-NC-ND license (*[http://creativecommons.org/licenses/by-nc-nd/4.0/](http://creativecommons.org/licenses/by-nc-nd/4.0/)

ພັດທະນາ, 1 ບ້ານໃຫຍ່, ມີ 52 ບ້ານ, ມີ 4,342 ຄອບຄົວມີພົນລະເມືອງທັງໝົດ 23,457 ຄົນ, ຍິງ 11,515 ຄົນ. ໂດຍອີງໃສ່ຈຸດພິເສດທາງດ້ານທີ່ຕັ້ງ, ພູມສັນຖານຂອງເມືອງປາກແຊງ ຍັງເປັນເຂດທີ່ມີຄວາມຫຍຸ້ງຍາກໃນການພັດທະນາ, ອັດຕາຄວາມທຸກຍາກຂອງປະຊາຊົນຍັງກວມອັດ ຕາສ່ວນຫຼາຍ, ການຜະລິດອຸດສາຫະກຳ ແລະ ການບໍລິການຍັງຢູ່ໃນຂັ້ນເລີ່ມຕົ້ນ, ການພັດທະນາທີ່ຢູ່ອາໄສຍັງຫຼ້າຊ້າ, ລະດັບການຜະລິດ, ປະລິມານສິນຄ້າ ແລະ ກຳລັງການຊື້-ຂາຍຍັງມີໜ້ອຍເຊິ່ງເປັນສິ່ງທ່ວງດຶງການພັດທະນາ, ການພັດທະນາເຕັກນິກ ແລະລະດັບການສຶກສາຍັງມີຄວາມຈຳກັດ ແລະ ບໍ່ທັນຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງການພັດທະນາໃນໄລຍະໃໝ່, ອີກດ້ານໜຶ່ງແມ່ນຍັງຂາດທຶນຮອນໃນການພັດທະນາເປັນເມືອງທີ່ຂາດ ດູນງົບປະມານ, ຈຶ່ງເປັນສາເຫດເຮັດໃຫ້ທຶນຮອນໃນການພັດທະນາຂາດແຄນ, ຍັງອາໄສການຊ່ວຍເຫຼືອຈາກພາຍນອກເປັນສ່ວນໃຫຍ່. ດັ່ງນັ້ນເປົ້າໝາຍຂອງແຜນພັດທະນາເສດຖະກິດສັງຄົມ 5 ປີ ຄັ້ງທີ X ແມ່ນ "ເມືອງປາກແຊງ ໃຫ້ມີພື້ນຖານເສດຖະກິດທີ່ເຂັ້ມແຂງ ແລະໝັ້ນຄົງໂດຍເນັ້ນໃສ່ພັດທະນາວຽກງານກະສິກຳ ເປັນຕົ້ນແມ່ນ ການລ້ຽງສັດປະເພດ ງົວ, ຄວາຍ, ການຜະລິດກະສິກຳສະອາດ ແລະປູກພືດອຸດສາຫະກຳເປັນສຳຄັນ, ຮັບປະກັນພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ ໃຫ້ໄດ້ຕາມຄາດໝາຍ, ປົກປັກຮັກສາວັດທະນະທຳ, ຮີດຄອງປະເພນີທີ່ດີງາມໃຫ້ຄົງຄຸນຄ່າດັ່ງເດີມຕະຫຼອດໄປ, ເອົາໃຈໃສ່ພັດທະນາການສຶກສາ, ສາທາລະນະສຸກ ແລະກຳລັງແຮງງານໃຫ້ມີຄຸນນະພາບ, ຍົກລະດັບເສັ້ນທາງໃຫ້ທຽວໄດ້ຕະຫຼອດປີ ກວມ 85% ຂຶ້ນໄປ, ພັດທະນາບ້ານ ໃຫ້ເປັນສີສັນຕົວເມືອງນ້ອຍໃນຊົນນະບົດ, ຮັບປະກັນໃຫ້ມີສິ່ງແວດລ້ອມທີ່ດີ, ສັງຄົມມີຄວາມສະຫງົບສຸກ, ເປັນລະບຽບຮຽບຮ້ອຍ ແລະຍຸຕິທຳ" (Administration office of Pakxeng district, 2024).

ໃນໄລຍະຜ່ານມາ, ບັນຫາໂຄງປະກອບເສດຖະກິດແມ່ນໜຶ່ງໃນບັນດາສາຍເຫດຂອງຄວາມທຸກຍາກ ແລະ ຄວາມບໍ່ສະເໝີພາບ ໂດຍສະເພາະໃນເຂດຊົນນະບົດທີ່ເພິ່ງພາການຜະລິດກະສິກຳແບບດັ້ງເດີມ ແລະ ປູກພືດຊະນິດດຽວທີ່ມີຄຸນນະພາບຕ່ຳ, ລາຄາປັດໄຈການຜະລິດເພີ່ມສູງຂຶ້ນ ແຕ່ລາຄາຜົນຜະລິດແມ່ນຕົກຕ່ຳ ແລະ ການປະກອບອາຊີບຍັງຂ້ອນຂ້າງໜ້ອຍ, ຂາດການວາງແຜນຜະລິດ ແລະ ການວາງແຜນການຕະຫຼາດ, ບໍ່ມີວຽກເຮັດງານທຳເພີ່ມເຕີມພາຍຫຼັງລະດູການຜະລິດ, ປະຊາຊົນໃນເຂດຊົນນະບົດເຄື່ອນຍ້າຍໄປເຮັດວຽກຢູ່ໃນຕົວເມືອງ ເຮັດໃຫ້ບັນຫາຄວາມບໍ່ສະເຫມີພາບທີ່ເປັນຊ່ອງຫວ່າງຂອງຄວາມແຕກຕ່າງຍິ່ງສູງຂຶ້ນ ລວມທັງຍັງມີພຶດຕິກຳຂາດການອອມ ແລະມີແນວໂນ້ມໜີ້ສິນສະສົມຫຼາຍຂຶ້ນ Sriwiboon & Virunannont (2013). ສະນັ້ນ ການພັດທະນາເສດຖະກິດຮາກຖານຈຶ່ງເປັນຄວາມຄາດໝາຍເພື່ອຫລຸດຜ່ອນຄວາມທຸກຍາກ ເພື່ອເຮັດໃຫ້ເສດຖະກິດຮາກຖານເຂັ້ມແຂງ ແລະ ໝັ້ນຄົງ ໂດຍການນຳໃຊ້ພະລັງງານປະຊາຊົນໃນລະດັບກາງ ແລະ ລະດັບທ້ອງຖິ່ນທີ່ພາຍໃຕ້ການຮ່ວມມືຂອງທຸກຂະແໜງການ ລວມທັງພາກລັດ, ເອກະຊົນ ແລະ ພາກລັດ (Yansombat, 2021).

ດັ່ງນັ້ນ, ການສົ່ງເສີມການເພິ່ງພາກັນເອງລະດັບທ້ອງຖິ່ນເປັນສິ່ງທີ່ດີ ແລະ ຄວນໄດ້ຮັບການສະໜັບສະໜູນ ເນື່ອງຈາກພາກຄອບຄົວ ແລະ ທ້ອງຖິ່ນເປັນພື້ນຖານທີ່ສຳຄັນຂອງສັງຄົມ ໂດຍສະເພາະແມ່ນກ່ຽວກັບການເປັນຕົນເອງທາງດ້ານເສດຖະກິດ, ຄວາມດຸ່ນດ່ຽງລະຫວ່າງລາຍຮັບ ແລະ ລາຍຈ່າຍຂອງປະຊາຊົນໃນທ້ອງຖິ່ນ, ບໍ່ມີໜີ້ສິນທີ່ບໍ່ສາມາດຊຳລະຄືນໄດ້ ແຕ່ສາມາດມີໜີ້ສິນຈາກການລົງທຶນເພື່ອຜະລິດກະສິກຳ ຫຼື ທຸລະກິດໄດ້ (Sen, 1999). ໃນກໍລະນີທີ່ປະຊາຊົນຈະສາມາດເພິ່ງພາຕົນເອງໄດ້ ນອກຈາກຈະສາມາດປັບຕົວ ແລະ ຮັກສາຄວາມສົມດູນລະຫວ່າງພາຍໃນທ້ອງຖິ່ນກັບກະແສໂລກາພິວັດແລ້ວ ຍັງເປັນການແກ້ໄຂພາວະເສດຖະກິດໃນປະຈຸບັນໄດ້ ດັ່ງທີ່ (Chansong, 2020) ກ່າວໄວ້ວ່າ: ການສົ່ງເສີມອາຊີບແມ່ນຂະບວນການພັດທະນາທ້ອງຖິ່ນເພື່ອສ້າງຊຸມຊົນທີ່ເຂັ້ມແຂງ, ເພິ່ງຕົນເອງໄດ້ ແລະ ຍັງເປັນການຊຸກຍູ້ໃຫ້ທ້ອງຖິ່ນສ້າງກຸ່ມອາຊີບທີ່ຫຼາກຫຼາຍ, ມີການເພິ່ງພາອາໄສກັນ ແລະ ເກີດຄວາມສາມັກຄີໃນທ້ອງຖິ່ນ ໂດຍຜ່ານການສ້າງການມີສ່ວນຮ່ວມຂອງປະຊາຊົນ. ແນວໃດກໍດີ, ແຕ່ລະທ້ອງຖິ່ນລ້ວນແຕ່ມີແນວທາງ ແລະ ວິທີການໃນການເພິ່ງພາຕົນເອງທີ່ແຕກຕ່າງກັນຕາມສະພາບການ ແລະ ສະພາບແວດລ້ອມຂອງແຕ່ລະທ້ອງຖິ່ນ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຢ່າງຍິ່ງໃນການສຶກສາທ້ອງຖິ່ນ ເພື່ອຮູ້ເຖິງສະພາບບັນຫາ ແລະ ຄວາມຕ້ອງການຂອງທ້ອງຖິ່ນ (Natsupa, 2001). ດັ່ງທີ່ Kata somboon .(2021) ໄດ້ເຮັດການສຶກສາກ່ຽວກັບການພັດທະນາທ່າແຮງຂອງທ້ອງຖິ່ນເພື່ອສ້າງເສດຖະກິດຮາກຖານແບບຍືນຍົງ: ບ້ານໂນນສາລາ ແຂວງນະຄອນສະຫວັນ ເຫັນວ່າ ການພັດທະນາເສດຖະກິດຖ້ອງຖິ່ນແມ່ນເໝາະສົມທີ່ຈະສ້າງຂະບວນການຮຽນຮູ້ໃໝ່ເພື່ອເປັນການສ້າງສະຖຽນລະພາບຂອງເສດຖະກິດຮາກຖານ ໂດຍນຳໃຊ້ປັດຊະຍາຂອງເສດຖະກິດພຽງພໍ ເພື່ອຫຼຸດຜ່ອນລາຍຈ່າຍ ແລະ ເພີ່ມລາຍຮັບຂອງຄົວເຮືອນ. ສ່ວນຂະບວນການຝຶກອົບຮົມແບບມີສ່ວນຮ່ວມເປັນຂະບວນການໃນການພັດພັດທະນາ ຕາມຜົນການສຶກສາໂຄງການພັດທະນາທ່າແຮງທາງດ້ານເສດຖະກິດກຸ່ມຕົນເອງ ບ້ານນາບອນ ແຂວງເລີຍ.

ການພັດທະນາທ່າແຮງຂອງທ້ອງຖິ່ນ ເພື່ອສ້າງພື້ນຖານເສດຖະກິດພາຍທ້ອງຖິ່ນໃຫ້ເຂັ້ມແຂງ, ຊ່ວຍໃຫ້ປະຊາຊົນມີພູມຕ້ານທານທີ່ດີ ແລະ ສ້າງຄວາມສົມດຸນທາງດ້ານລາຍໄດ້, ຮູ້ລາຍຮັບ, ລາຍຈ່າຍ ແລະ ຫຼຸດຜ່ອນໜີ້ສິນ, ເພີ່ມເງິນອອມ, ມີການສ້າງອາຊີບ, ສ້າງລາຍໄດ້ ອັນຈະນຳໄປສູ່ການຍົກສູງຄຸນນະພາບຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ, ສາມາດເພິ່ງພາຕົນເອງໄດ້ (Knecht, 2012).

ສະນັ້ນ, ການຄົ້ນຄວ້ານີ້ ມີຈຸດປະສົງເພື່ອສຶກສາ 1) ສະພາບລວມໃນການເພິ່ງພາຕົນເອງທາງດ້ານເສດຖະກິດຂອງປະຊາຊົນ ພາຍໃນເມືອງປາກແຊງ ແຂວງຫຼວງພະບາງ ແລະ 2) ວິເຄາະຄວາມສໍາພັນລະຫວ່າງປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການເພິ່ງພາຕົນເອງທາງດ້ານເສດຖະກິດຂອງປະຊາຊົນ ພາຍໃນເມືອງປາກແຊງ ແຂວງຫຼວງພະບາງ.

## 2. ອຸປະກອນ ແລະ ກຸ່ມຕົວຢ່າງ

2.1 ກຸ່ມຕົວຢ່າງ

ການຄົ້ນຄວ້ານີ້ ໄດ້ກໍານົດເອົາກຸ່ມປະຊາກອນເປັນຈໍານວນຄອບຄົວຂອງປະຊາຊົນ ພາຍໃນບ້ານປາກແຊງ ຈໍານວນ 265 ຄອບຄົວ ແລະ ບ້ານບວມພາແສງ ຈໍານວນ 147 ຄອບຄົວ ລວມທັງໝົດ 412 ຄອບຄົວ ແລະ ສາມາດຄິດໄລ່ກຸ່ມຕົວຢ່າງ ຕາມວິທີຂອງ Taro Yamane (1973) ໄດ້ກຸ່ມຕົວຢ່າງ ຈໍານວນ 203 ຄອບຄົວ.

2.2 ເຄື່ອງມືທີ່ໃຊ້ໃນການວິໄຈ

ການຄົ້ນຄວ້ານີ້ ໄດ້ນໍາໃຊ້ວິທີການສຶກສາແບບປະລິມານ ໂດຍນໍາໃຊ້ໃຊ້ແບບສອບຖາມທີ່ມີລັກສະນະປາຍປິດ ແມ່ນໄດ້ອີງໃສ່ແນວຄວາມຄິດ ແລະ ທິດສະດີກ່ຽວກັບການເພິ່ງພາຕົນເອງ (ສັນຍາວິວັດ, 2003), ບົດຄົ້ນຄວ້າຂອງ (Sen, 1999) ແລະ Phonngam1, Srisawat, & Noomak (2018) ມາເປັນແນວທາງໃນການກໍານົດ ເຊິ່ງແບ່ງອອກເປັນ 3 ສ່ວນ ຄື: ຂໍ້ມູນສະມາຊິກໃນຄອບຄົວ ແມ່ນໃຊ້ເປັນຄໍາຖາມປາຍເປີດ; ຂໍ້ມູນການເພິ່ງພາຕົນເອງທາງເສດຖະກິດຂອງຄອບຄົວ ແມ່ນໄດ້ກໍານົດເປັນ Choice ໃຫ້ເລືອກ; ຂໍ້ມູນຄວາມສາມາດໃນການເພິ່ງພາຕົນເອງທາງດ້ານເສດຖະກິດຂອງຄອບຄົວ ໂດຍສະເພາະຂໍ້ມູນປັດໄຈທີ່ເຮັດໃຫ້ສາມາດເພິ່ງພາຕົນເອງທາງເສດຖະກິດໄດ້ ແມ່ນໄດ້ກໍານົດເປັນ (yes/no question) ທີ່ທາງທີມງານຄົ້ນຄວ້າວິໄຈໄດ້ສ້າງຂຶ້ນມາເພື່ອເປັນເຄື່ອງມືໃນການເກັບກໍາ ແລະ ລວບລວມຂໍ້ມູນຈາກຄອບຄົວຂອງປະຊາຊົນທີ່ເປັນກຸ່ມຕົວຢ່າງເປົ້າໝາຍ.

### 2.3 ການເກັບລວບລວມຂໍ້ມູນ

ນໍາໃຊ້ແບບສອບຖາມລົງເກັບກໍາຂໍ້ມູນຈາກກຸ່ມເປົ້າໝາຍ ເຊິ່ງແມ່ນບັນດາປະຊາຊົນທີ່ອາໄສຢູ່ໃນບ້ານປາກແຊງ ແລະ ບ້ານບວມພາແສງ ເມືອງປາກແຊງ ແຂວງຫຼວງພະບາງ ດ້ວຍການນໍາແບບສອບຖາມລົງໄປແຈກຢາຍໃຫ້ກັບຜູ້ເປັນຫົວໜ້າຄອບຄົວ ຫຼື ສະມາຊິກໃນຄອບຄົວທີ່ມີຄວາມຮູ້ ແລະ ເຂົ້າໃຈກ່ຽວກັບຂໍ້ມູນຂອງຄອບຄົວ; ພ້ອມທັງໄດ້ອະທິບາຍລາຍລະອຽດກ່ຽວກັບແຕ່ລະຂໍ້ຄໍາຖາມໃນແບບສອບຖາມເພື່ອໃຫ້ຜູ້ຕອບແບບສອບຖາມມີຄວາມເຂົ້າໃຈ ແລະ ໃຫ້ຂໍ້ມູນໄດ້ຖືກຕ້ອງຕາມຈຸດປະສົງທີ່ຕ້ອງການ.

### 2.4 ການວິເຄາະຂໍ້ມູນ

ພາຍຫຼັງເກັບກໍາຂໍ້ມູນໄດ້ສໍາເລັດແລ້ວ ແມ່ນໄດ້ນໍາມາວິເຄາະໂດຍ ຜ່ານໂປຼແກມວິເຄາະຂໍ້ມູນທາງສະຖິຕິ (SPSS Version 27) ເພື່ອຫາຄ່າຄວາມຖີ່ ແລະ ຊອກຫາຄ່າສ່ວນຮ້ອຍ (%) ໂດຍນໍາສະເໜີເປັນຕາຕະລາງສໍາລັບຂໍ້ມູນສະພາບທົ່ວໄປໃນການເພິ່ງພາຕົນເອງທາງດ້ານເສດຖະກິດ; ສ່ວນຂໍ້ມູນຄວາມສໍາພັນຂອງປັດໄຈທີ່ສົ່ງຜົນຕໍ່ຄວາມສາມາດໃນການເພິ່ງພາຕົນເອງທາງດ້ານເສດຖະກິດ ຂອງປະຊາຊົນເມືອງປາກແຊງ ແຂວງຫຼວງພະບາງ ໄດ້ນໍາໃຊ້ສະຖິຕິວິເຄາະວິເຄາະຄວາມສໍາພັນແບບ (Chi-Square) ເຂົ້າໃນການວິເຄາະຂໍ້ມູນ ໂດຍການວິເຄາະຜ່ານໂປຼແກມວິເຄາະຂໍ້ມູນທາງສະຖິຕິ (SPSS Version 27).

## 3. ຜົນໄດ້ຮັບ

ການສຶກສາສະພາບລວມໃນການເພິ່ງພາຕົນເອງທາງດ້ານເສດຖະກິດຂອງປະຊາຊົນ ພາຍໃນເມືອງປາກແຊງ ແຂວງຫຼວງພະບາງ ແມ່ນປະກອບດ້ວຍ 5 ດ້ານ ຄື: 1) ການເພິ່ງພາຕົນເອງທາງດ້ານລາຍໄດ້-ລາຍຈ່າຍ ແລະ ການອອມຂອງຄອບຄົວ ພົບວ່າ: ຄອບຄົວທີ່ມີອັດຕາສ່ວນສະມາຊິກໃນຄອບຄົວທີ່ສາມາດປະກອບອາຊີບ ຫຼື ສາມາດສ້າງລາຍໄດ້ ຢູ່ລະຫວ່າງ 0.50 – 1.00 ຫຼື 50.00 – 100% ກວມເອົາ 56.29%; ສ່ວນຄອບຄົວມີອັດຕາສ່ວນສະມາຊິກໃນຄອບຄົວທີ່ສາມາດປະກອບອາຊີບ ຫຼື ສາມາດສ້າງລາຍໄດ້ ຢູ່ລະຫວ່າງ 0.00 – 0.49 ຫຼື 0.00 – 49% ກວມເອົາ 43.71% ຕາມລໍາດັບ. ລາຍໄດ້ຫຼັກສະເລ່ຍຕໍ່ປີຂອງຄອບຄົວ ໂດຍສະເລ່ຍຕໍ່ຄອບຄົວແມ່ນ 34,994,000 ກີບ/ຄອບຄົວ ເຊິ່ງສ່ວນໃຫຍ່ແມ່ນຢູ່ລະຫວ່າງ 10,000,000 – 30,000,000 ກີບ/ປີ ກວມເອົາ 42.31%, ມີລາຍໄດ້ສະເລ່ຍຕໍ່ຄົນ ຕໍ່າສຸດ ຢູ່ທີ່ 1,500,000 ກີບ ແລະ ມີລາຍໄດ້ສະເລ່ຍຕໍ່ຄົນ ສູງສຸດ ຢູ່ທີ່ 15,000,000 ກີບ; ເມື່ອສົມທຽບໃສ່ມາດຕະຖານການພົ້ນທຸກ ຕາມດໍາລັດວ່າດ້ວຍມາດຕະຖານການພົ້ນທຸກ ແລະ ການພັດທະນາ ຂອງລັດຖະບານແຫ່ງ ສປປ ລາວ (ດໍາລັດ 348) ແລ້ວເຫັນໄດ້ວ່າ: ຄອບຄົວທີ່ພົ້ນທຸກ ຫຼື ມີຄວາມສາມາດກຸ້ມຕົນເອງທາງດ້ານລາຍໄດ້ ກວມເອົາ 56.99%; ສ່ວນທີ່ເຫຼືອແມ່ນຄອບຄົວທີ່ຢູ່ໃນເກນຄອບຄົວທີ່ຍັງບໍ່ສາມາດພົ້ນທຸກ ຫຼື ຍັງບໍ່ສາມາດກຸ້ມຕົນເອງທາງດ້ານລາຍໄດ້. ນອກຈາກລາຍໄດ້ຫຼັກແລ້ວ ປະຊາຊົນ ຈໍານວນ 103 ຄອບຄົວ ກວມເອົາ 50.74% ແມ່ນຍັງມີລາຍໄດ້ເສີມ ຈາກການທີ່ສະມາຊິກໃນຄອບຄົວໄປເຮັດອາຊີບເສີມເຊັ່ນ: ໄປເປັນກໍາມະກອນຢູ່ໃນຕົວເມືອງ ຫຼື ຕ່າງແຂວງ ຄິດເປັນ 34.95%, ຮອງລົງມາແມ່ນຮັບເໝົາກໍ່ສ້າງ ຄິດເປັນ 29.13% ຕາມລໍາດັບ. ເຊິ່ງລາຍໄດ້ເສີມສະເລ່ຍຕໍ່ຄອບຄົວແມ່ນ 3,975,000 ກີບ/ຄອບຄົວ; ອາຊີບທີ່ສາມາດສ້າງລາຍໄດ້ມາເກື້ອກູນຄອບຄົວ ໂດຍສ່ວນໃຫຍ່ແມ່ນຊາວກະສິກອນ ເຊິ່ງມີຈໍານວນ ຄິດເປັນ 31.34% ແລະ ກວມເອົາ 36.71% ຂອງກຸ່ມຕົວຢ່າງ, ຮອງລົງມາແມ່ນພະນັກງານລັດ ຄິດເປັນ 28.36% ແລະ ກວມເອົາ 33.22% ຂອງກຸ່ມຕົວຢ່າງ, ເຊິ່ງລາຍໄດ້ສ່ວນໃຫຍ່ທີ່ນໍາມາເກື້ອກູນຄອບຄົວມາຈາກຫົວໜ້າຄອບຄົວ ກວມເອົາ 55.59%, ຮອງລົງມາແມ່ນມາຈາກສາມີ ຫຼື ພັນລະຍາຂອງຫົວໜ້າຄອບຄົວ ກວມເອົາ 27.62%. ໃນສ່ວນຂອງລາຍຈ່າຍຄອບຄົວ ຈະເຫັນໄດ້ວ່າ: ປະຊາຊົນໂດຍສ່ວນໃຫຍ່ແມ່ນບໍ່ມີຄ່າໃຊ້ຈ່າຍສໍາລັບທີ່ຢູ່ອາໄສ ເຊັ່ນ: ຄ່າເຊົ່າ ຫຼື ອື່ນໆ ເນື່ອງຈາກທີ່ຢູ່ອາໄສເປັນຂອງຄອບຄົວສ້າງຂຶ້ນເອງ ເຊິ່ງກວມເອົາ 81.47%, ຮອງລົງມາແມ່ນບໍ່ມີຄ່າໃຊ້ຈ່າຍສໍາລັບພາຫະນະ ເຊັ່ນ: ລົດຈັກ, ລົດໃຫຍ່ ກວມເອົາ 79.72%, ແຕ່ຈະມີຄ່າໃຊ້ຈ່າຍໃນສ່ວນຂອງອາຫານ ແລະ ເຄື່ອງ

ດື່ມ, ເຄື່ອງນຸ່ງຮົ່ມ, ຄ່າສາທາລະນູປະໂພກ (ຄ່ານໍ້າປະປາ, ຄ່າໄຟຟ້າ, ຄ່າໂທລະສັບ) ຫຼາຍທີ່ສຸດ ເຊິ່ງກວມເອົາ 97.90% ຂຶ້ນໄປ; ຮອງລົງມາແມ່ນຄ່າໃຊ້ຈ່າຍຄ່າໃຊ້ຈ່າຍໃນການຄຸ້ມຄອງ (ຄ່າກອງທຶນບ້ານ), ຄ່າໃຊ້ຈ່າຍສໍາລັບການຮັກສາພະຍາບານ, ຄ່ານໍ້າມັນເຊື້ອໄຟ, ຄ່າໃຊ້ຈ່າຍຟູມເຟືອຍ ເຊັ່ນ: ເຫຼົ້າ, ເບຍ, ຢາສູບ, ຊື້ຫວຍ, ຄ່າໃຊ້ຈ່າຍສໍາລັບການສຶກສາ ແລະ ຄ່າທໍາບຸນ/ງານບຸນຕ່າງໆ/ທໍານຽມສັງຄົມ ເຊິ່ງກວມເອົາ 86.36% ຂຶ້ນໄປ; ໃນສ່ວນຂອງການອອມເງິນຂອງປະຊາຊົນ ພົບວ່າ: ປະຊາຊົນ 59.79% ແມ່ນຍັງບໍ່ມີການອອມເງິນ; 2) ດ້ານຊັບສິນ ແລະ ໜີ້ສິນຂອງຄອບຄົວ ພົບວ່າ: ຊັບສິນທີ່ມີໃນຄອບຄົວຂອງປະຊາຊົນປະກອບມີ: ເຮືອນຢູ່ ກວມເອົາ 98.25%, ທີ່ດິນໃນການທໍາມາຫາກິນ ກວມເອົາ 81.47% ຂອງຈໍານວນຄອບຄົວທັງໝົດ, ລົດໃຫຍ່ ກວມເອົາ 30.77%, ລົດຈັກ ກວມເອົາ 66.78%, ໂທລະທັດ ກວມເອົາ 84.97%, ຕູ້ເຢັນ ກວມເອົາ 72.38%, ງົວ ຫຼື ຄວາຍ ກວມເອົາ 35.31%, ໝູ ກວມເອົາ 23.78%, ແບ້ ກວມເອົາ 27.27% ແລະ ເປັດ ຫຼື ໄກ່ ກວມເອົາ 45.45% ຂອງຈໍານວນຄອບຄົວທັງໝົດ ຕາມລໍາດັບ; ພ້ອມດຽວກັນນັ້ນ ຈາກຜົນການສໍາຫຼວດຂໍ້ມູນ ຍັງພົບວ່າ ປະຊາຊົນຈໍານວນ 81.46% ແມ່ນບໍ່ມີໜີ້ສິນ ເຊິ່ງເກີດຈາກການກູ້ຢືມທັງພາຍໃນ ຫຼື ນອກລະບົບ. 3) ດ້ານຄວາມຮູ້ທາງດ້ານການເງິນໃນການເຮັດບັນຊີລາຍຮັບ-ລາຍຈ່າຍ ຂອງຄອບຄົວ ພົບວ່າ: ປະຊາຊົນ ຈໍານວນ 89.51% ແມ່ນບໍ່ໄດ້ເຮັດບັນຊີລາຍຮັບ-ລາຍຈ່າຍຂອງຄອບຄົວ ເນື່ອງຈາກຍັງຂາດຄວາມຮູ້ ແລະ ປະສົບການທາງດ້ານການເງິນ ແລະ ຍັງບໍ່ເຄີຍເຮັດມາກ່ອນ; 4) ດ້ານການໄດ້ຮັບຄວາມຊ່ວຍເຫຼືອທາງເສດຖະກິດຂອງຄອບຄົວ (ກິດຈະກໍາສົ່ງເສີມເສດຖະກິດຄອບຄົວ) ພົບວ່າ: ກິດຈະກໍາທີ່ສາມາດຊ່ວຍໃຫ້ຄອບຄົວສາມາດກຸ້ມຕົນເອງໄດ້ອີກ ກໍ່ຍັງມີ: ການປູກຜັກສວນຄົວ ເຊັ່ນ: ຜັກກາດ, ໝາກເຜັດ, ໝາກເຂືອ, ຜັກບົ່ວ, ຜັກຫອມ ແລະ ອື່ນໆ ເພື່ອໄວ້ບໍລິໂພກໃນຄອບຄົວ ກວມເອົາ 52.10%, ຮອງລົງມາແມ່ນກິດຈະກໍາລ້ຽງສັດ ເຊັ່ນ: ໝູ, ແບ້, ເປັດ, ໄກ່ ແລະ ອື່ນໆ ກວມເອົາ 41.96%, ກິດຈະກໍາການສົ່ງເສີມການສ້າງອາຊີບເສີມ ເຊັ່ນ: ການຕັດຫຍິບ, ການຂາຍເຄື່ອງຍ່ອຍ, ການປູກຢາງພາລາ ແລະ ອື່ນໆ ກວມເອົາ 29.72% ແລະ ກິດຈະກໍາການເກັບເຄື່ອງປ່າຂອງດົງໄປຂາຍ ກວມເອົາ 4.20% ຂອງກຸ່ມຕົວຢ່າງທັງໝົດ ແລະ 5) ດ້ານສະພາບທີ່ຢູ່ອາໄສ ພົບວ່າ: ທີ່ຢູ່ອາໄສຂອງປະຊາຊົນແມ່ນມີຄວາມໝັ້ນຄົງ, ທົນທານ ແລະ ປອດໄພ ກວມເອົາ 95.8%, ໂດຍວັດສະດຸທີ່ໃຊ້ໃນການກໍ່ສ້າງເຮືອນ ສ່ວນໃຫຍ່ເປັນຊີເມັນ ກວມເອົາ 74.8%, ຮອງລົງມາແມ່ນໄມ້.

ຜົນການວິເຄາະປັດໄຈທີ່ມີຄວາມສໍາພັນກັບຄວາມສາມາດໃນການເພິ່ງພາຕົນເອງທາງດ້ານເສດຖະກິດ ຂອງປະຊາຊົນໃນເມືອງປາກແຊງ ແຂວງຫຼວງພະບາງ (ດັ່ງສະແດງໃນຕາຕະລາງທີ 1) ຈໍານວນທັງໝົດ 18 ປັດໄຈ ພົບວ່າ: ມີ 11 ປັດໄຈເທົ່ານັ້ນ ທີ່ມີຄວາມສໍາພັນກັບຄວາມສາມາດໃນການເພິ່ງພາຕົນເອງທາງດ້ານເສດຖະກິດ ຂອງປະຊາຊົນໃນເມືອງປາກແຊງ ແຂວງຫຼວງພະບາງ ເຊິ່ງປະກອບດ້ວຍ: ປັດໄຈດ້ານການອອມຂອງຄອບຄົວ, ກິດຈະກໍາປູກຜັກສວນຄົວ, ກິດຈະກໍາລ້ຽງສັດ, ຄ່າຄອງຊີບ ແລະ ໄພທໍາມະຊາດ ແມ່ນມີຄວາມສໍາພັນກັບຄວາມສາມາດໃນການເພິ່ງພາຕົນເອງທາງດ້ານເສດຖະກິດຂອງປະຊາຊົນ ດ້ວຍລະດັບຄວາມສໍາຄັນທາງດ້ານສະຖິຕິ ທີ່ລະດັບ 0.01; ໂດຍມີຄ່າຄວາມສໍາພັນ 10.957, 8.541, 7.519, 22.259 ແລະ 19.213 ຕາມລໍາດັບ. ປັດໄຈດ້ານຈໍານວນສະມາຊິກທີ່ສາມາດສ້າງລາຍຮັບ, ຄວາມໝັ້ນຄົງຂອງທີ່ຢູ່ອາໄສ, ລະດັບການສຶກສາສູງສຸດຂອງສະມາຊິກໃນຄອບຄົວ, ການເຮັດບັນຊີລາຍຮັບ-ລາຍຈ່າຍຂອງຄອບຄົວ ແລະ ກິດຈະກໍາເກັບເຄື່ອງປ່າຂອງດົງ ແມ່ນມີຄວາມສໍາພັນກັບຄວາມສາມາດໃນການເພິ່ງພາຕົນເອງທາງດ້ານເສດຖະກິດຂອງປະຊາຊົນ ດ້ວຍລະດັບຄວາມສໍາຄັນທາງດ້ານສະຖິຕິ ທີ່ລະດັບ 0.05; ໂດຍມີຄ່າຄວາມສໍາພັນ 15.843, 5.764, 12.018, 6.197 ແລະ 5.126 ຕາມລໍາດັບ. ແລະ ຈໍານວນສະມາຊິກໃນຄອບຄົວ ແມ່ນມີຄວາມສໍາພັນກັບຄວາມສາມາດໃນການເພິ່ງພາຕົນເອງທາງດ້ານເສດຖະກິດຂອງປະຊາຊົນ ດ້ວຍລະດັບຄວາມສໍາຄັນທາງດ້ານສະຖິຕິ ທີ່ລະດັບ 0.1; ໂດຍມີຄ່າຄວາມສໍາພັນ 15.575.

## 4. ວິພາກຜົນ

ການສຶກສາສະພາບການເພິ່ງພາຕົນເອງທາງດ້ານເສດຖະກິດຂອງປະຊົນໃນເມືອງປາກແຊງ ແຂວງຫຼວງພະບາງ ແມ່ນນໍາໃຊ້ຕົວຊີ້ວັດທາງເສດຖະກິດຂອງຄອບຄົວ ປະກອບດ້ວຍ 5 ດ້ານ ຄື: ດ້ານລາຍໄດ້-ລາຍຈ່າຍຂອງຄອບຄົວ ແລະ ການອອມຂອງຄອບຄົວ, ດ້ານຊັບສິນ ແລະ ໜີ້ສິນຂອງຄອບຄົວ, ການເຮັດບັນຊີລາຍຮັບ-ລາຍຈ່າຍຂອງຄອບຄົວ, ການໄດ້ຮັບຄວາມຊ່ວຍເຫຼືອທາງເສດຖະກິດຂອງຄອບຄົວ (ກິດຈະກໍາສົ່ງເສີມເສດຖະກິດຄອບຄົວ) ແລະ ສະພາບທີ່ຢູ່ອາໄສ ໂດຍນໍາໃຊ້ຕົວຊີ້ວັດຄອບຄົວເຂັ້ມແຂງດ້ານການເພິ່ງພາຕົນເອງທາງດ້ານເສດຖະກິດລະດັບຄອບຄົວ ແລະ ດັດສະນີຊີ້ວັດມາດຖານຄວາມໝັ້ນຄົງ ເພື່ອຊີ້ວັດເຖິງຄວາມສາມາດໃນການເພິ່ງພາຕົນເອງທາງດ້ານເສດຖະກິດຂອງປະຊົນໃນເມືອງປາກແຊງ ແຂວງຫຼວງພະບາງ ໂດຍມີລາຍລະອຽດດັ່ງຕໍ່ໄປນີ້: ໃນດ້ານລາຍໄດ້-ລາຍຈ່າຍ ແລະ ການອອມຂອງຄອບຄົວ ພົບວ່າ ຄອບຄົວທີ່ມີອັດຕາສ່ວນສະມາຊິກໃນຄອບຄົວທີ່ສາມາດປະກອບອາຊີບ ຫຼື ສາມາດສ້າງລາຍໄດ້ ແມ່ນຍັງຂ້ອນຂ້າງຢູ່ໃນລະດັບຕໍ່າ ໂດຍສົມທຽບໃສ່ມາດຕະຖານການພົ້ນທຸກຂອງ Government of the Lao PDR (2024) ຕາມດໍາລັດວ່າດ້ວຍມາດຕະຖານການພົ້ນທຸກ ແລະ ການພັດທະນາ ຂອງລັດຖະບານແຫ່ງ ສປປ ລາວ (ດໍາລັດ 348) ແລ້ວເຫັນໄດ້ວ່າ: ຄອບຄົວທີ່ຢູ່ໃນເກນຄອບຄົວທີ່ພົ້ນທຸກ ຫຼື ມີຄວາມສາມາດກຸ້ມຕົນເອງທາງດ້ານລາຍໄດ້ ກວມເອົາພຽງ 56.99% ເທົ່ານັ້ນ; ໂດຍອາຊີບທີ່ສາມາດສ້າງລາຍໄດ້ມາເກື້ອກູນຄອບຄົວ ໂດຍສ່ວນໃຫຍ່ແມ່ນການເຮັດການກະສິກໍາ ແລະ ພະນັກງານລັດ; ເຊິ່ງລາຍໄດ້ສ່ວນໃຫຍ່ທີ່ນໍາມາເກື້ອກູນຄອບຄົວມາຈາກຫົວໜ້າຄອບຄົວເປັນຫຼັກ; ໃນສ່ວນຂອງລາຍຈ່າຍຄອບຄົວ ຈະເຫັນໄດ້ວ່າ: ປະຊາຊົນໂດຍສ່ວນໃຫຍ່ແມ່ນມີຄ່າໃຊ້ຈ່າຍໃນສ່ວນຂອງອາຫານ ແລະ ເຄື່ອງດື່ມ, ເຄື່ອງນຸ່ງຮົ່ມ, ຄ່າສາທາລະນູປະໂພກ (ຄ່ານໍ້າ

ປະປາ, ຄ່າໄຟຟ້າ, ຄ່າໂທລະສັບ) ຫຼາຍທີ່ສຸດ ແລະ ເມື່ອນຳມາສົມທຽບລະຫວ່າງລາຍຮັບ ແລະ ລາຍຈ່າຍແລ້ວ ປະຊາຊົນແມ່ນມີລາຍໄດ້ໜ້ອຍກວ່າລາຍຈ່າຍ ຫຼື ລາຍໄດ້ເທົ່າໆກັບລາຍຈ່າຍ ກວມເອົາເປັນສ່ວນໃຫຍ່, ປະຊາຊົນສ່ວນໃຫຍ່ຍັງບໍ່ມີການອອມເງິນ, ດ້ານພາລະໜີ້ສິນຂອງຄອບຄົວມີພຽງບາງຄອບຄົວເທົ່ານັ້ນ ແລະ ໜີ້ສິນໂດຍສ່ວນໃຫຍ່ແມ່ນເກີດມາຈາກການກູ້ຢືມເພື່ອມາໃຊ້ໃນການຜະລິດກະສິກຳ ແລະ ລ້ຽງສັດໃຫຍ່, ພ້ອມດຽວກັນນັ້ນ ໂດຍສ່ວນໃຫຍ່ແລ້ວປະຊາຊົນຍັງຂາດການເຮັດບັນຊີລາຍຮັບລາຍຈ່າຍຂອງຄອບຄົວ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Yansombat (2021) ທີ່ພົບວ່າ ລາຍໄດ້ຄອບຄົວບໍ່ພຽງພໍກັບຄ່າໃຊ້ຈ່າຍ, ບໍ່ມີການອອມເງິນ ແລະ ເຮັດບັນຊີລາຍຮັບລາຍຈ່າຍຂອງຄອບຄົວ; ສ່ວນພາລະໜີ້ສິນຂອງຄອບຄົວໂດຍສ່ວນໃຫຍ່ແມ່ນບໍ່ມີໜີ້ສິນ, ປະຊາຊົນສ່ວນໃຫຍ່ຍັງບໍ່ໄດ້ຄວາມຊ່ວຍເຫຼືອທາງດ້ານເສດຖະກິດ ແລະ ຍັງຕ້ອງການຄວາມຊ່ວຍເຫຼືອທາງດ້ານເສດຖະກິດ ເນື່ອງຈາກການຜະລິດກະສິກຳໄດ້ຜົນຜະລິດ ແລະ ລາຍຮັບໜ້ອຍ ປະຊາຊົນຈຶ່ງມີອາຊີບຮັບຈ້າງທົ່ວໄປ, ຍັງຂາດຄວາມຮູ້ ແລະ ທັກສະໃນການປະກອບອາຊີບ.ດ້ານສະພາບທີ່ຢູ່ອາໄສ ແລະ ຄວາມໝັ້ນຄົງຂອງຄອບຄົວ ພົບວ່າ ໂດຍສ່ວນໃຫຍ່ປະຊາຊົນແມ່ນເປັນເຈົ້າຂອງເຮືອນ ແລະ ທີ່ດິນສຳລັບການປຸກສ້າງທີ່ຢູ່ອາໄສໂດຍກົງ, ວັດສະດຸທີ່ໃຊ້ໃນການກໍ່ສ້າງເຮືອນ ສ່ວນໃຫຍ່ເປັນຊີເມັນ ແລະ ໄມ້, ມີຄວາມໝັ້ນຄົງ, ທົນທານ ແລະ ປອດໄພ; ສຳລັບກິດຈະກຳທີ່ສາມາດຊ່ວຍໃຫ້ຄອບຄົວສາມາດກຸ້ມຕົນເອງໄດ້ອີກ ກໍ່ຍັງມີ: ການປູກພືດສວນຄົວ ເຊັ່ນ: ຜັກກາດ, ໝາກເຜັດ, ໝາກເຂືອ, ຜັກບົ່ວ, ຜັກຫອມ ແລະ ອື່ງ ເພື່ອໄວ້ບໍລິໂພກໃນຄອບຄົວ ຮອງລົງມາແມ່ນກິດຈະກຳລ້ຽງສັດ ເຊັ່ນ: ໝູ, ແບ້, ເປັດ, ໄກ່ ແລະ ອື່ນໆ ຖັດມາແມ່ນກິດຈະກຳການສິ່ງເສີມການສ້າງອາຊີບເສີມ ເຊັ່ນ: ບໍລິການຕັດຫຍິບ ແລະ ຮ້ານເສີມຄວາມງາມ ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Phon-ngam, et al. (2018) ໃນເລື່ອງທີ່ປະຊາຊົນໄດ້ລຸດຜ່ອນຄ່າໃຊ້ຈ່າຍໂດຍການປູກພືດສວນຄົວ ເຊິ່ງກິດຈະກຳນີ້ສາມາດເຮັດໄດ້ທຸກຄອບຄົວ ໂດຍໃຫ້ແຕ່ລະຄອບຄົວປູກພືດຜັກທີ່ໃຊ້ບໍລິໂພກເປັນປະຈຳ ເຊັ່ນ: ຜັກບົ່ວ, ຜັກຫອມ, ຫົວສີໄຄ, ໝາກເຜັດ, ໝາກເຂືອ, ຂີງ, ຂ່າ ແລະ ອື່ນໆ.

ຜົນການສຶກສາປັດໄຈທີ່ມີຄວາມສຳພັນກັບຄວາມສາມາດໃນການເພິ່ງພາຕົນເອງທາງດ້ານເສດຖະກິດຂອງປະຊົນໃນເມືອງປາກແຊງ ແຂວງຫຼວງພະບາງ ພົບວ່າ: ປັດໄຈດ້ານຈຳນວນສະມາຊິກທີ່ສາມາດສ້າງລາຍຮັບ, ປັດໄຈດ້ານຄວາມໝັ້ນຄົງຂອງທີ່ຢູ່ອາໄສ, ປັດໄຈດ້ານການອອມຂອງຄອບຄົວ, ປັດໄຈດ້ານລະດັບການສຶກສາຂອງສະມາຊິກໃນຄອບຄົວ ແມ່ນມີຄວາມສຳພັນກັບຄວາມສາມາດໃນການເພິ່ງພາຕົນເອງທາງດ້ານເສດຖະກິດຂອງປະຊົນໃນເມືອງປາກແຊງ ແຂວງຫຼວງພະບາງໃນທິດທາງດຽວກັນ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Chanhtanguen et al., (2023) ແລະ Sanyamo (2023). ທີ່ວ່າ: ລະດັບການສຶກສາທີ່ສູງຂຶ້ນຈະສົ່ງຜົນຄວາມສາມາດໃນການສ້າງລາຍໄດ້ຂອງສະມາຊິກໃນຄົວເຮືອນສູງຂຶ້ນ ແລະ ເຮັດໃຫ້ລາຍໄດ້ຂອງຄອບຄົວສູງຂຶ້ນ ແລະ ເມື່ອລາຍໄດ້ຂອງຄອບຄົວເພີ່ມຂຶ້ນກໍ່ຈະເຮັດໃຫ້ພາວະຄວາມທຸກຍາກລຸດລົງ ແລະ ມີຄວາມສາມາດໃນການກຸ້ມຕົນເອງຫຼາຍຂຶ້ນ; ສ່ວນປັດໄຈດ້ານກິດຈະກຳປູກພືດສວນຄົວ, ປັດໄຈດ້ານກິດຈະກຳລ້ຽງສັດ ແລະ ປັດໄຈດ້ານກິດຈະກຳເກັບເຄື່ອງປ່າຂອງດົງ ແມ່ນມີຄວາມສຳພັນໄປໃນທິດທາງດຽວກັນກັບຄວາມສາມາດໃນການເພິ່ງພາຕົນເອງທາງເສດຖະກິດປະຊາຊົນໃນເມືອງປາກແຊງ ແຂວງຫຼວງພະບາງ ນັ້ນຄື: ເມື່ອປັດໄຈຕ່າງໆເລົ່ານີ້ມີການປ່ຽນແປງເພີ່ມຂຶ້ນ ຫຼື ລຸດລົງ ຄວາມສາມາດໃນການເພິ່ງພາຕົນເອງທາງເສດຖະກິດ ປະຊາຊົນໃນເມືອງປາກແຊງ ແຂວງຫຼວງພະບາງ ກໍ່ຈະເພີ່ມຂຶ້ນ ຫຼື ລຸດຕາມເຊັ່ນກັນ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05 ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Sanyawiwat (1998) ແລະ Watanabe et al., (2014) ທີ່ກ່າວວ່າການໄດ້ຮັບຄວາມຊ່ວຍເຫຼືອທາງເສດຖະກິດຂອງຄອບຄົວ ຫຼື ກິດຈະກຳສົ່ງເສີມເສດຖະກິດຄອບຄົວ ປະກອບດ້ວຍ: ກິດຈະກຳສ້າງເສີມອາຊີບເສີມ, ກິດຈະກຳປູກພືດສວນຄົວ, ກິດຈະກຳລ້ຽງສັດ ແລະ ປັດໄຈດ້ານກິດຈະກຳເກັບເຄື່ອງປ່າຂອງດົງ. ປັດໄຈດ້ານການເຮັດບັນຊີລາຍຮັບ-ລາຍຈ່າຍຂອງຄອບຄົວ ເມື່ອປະຊາຊົນມີຄວາມຮູ້ຄວາມສາມາດທາງດ້ານການເງິນໃນການເຮັດບັນຊີລາຍຮັບ-ລາຍຈ່າຍຂອງຄອບຄົວ ຈະຊ່ວຍປະຊາຊົນສາມາດຄຸ້ມຄອງລາຍຮັບ-ລາຍຈ່າຍ ແລະ ວາງແຜນທາງການເງິນ ເຊິ່ງສອດຄ່ອງກັບຜົນການຄົ້ນຄວ້າຂອງ Wongphang et al. (2019) ທີ່ວ່າ: ປັດໄຈທີ່ກ່ຽວຂ້ອງກັບຄວາມຮູທາງການເງິນ ແລະ ບັນຊີ ມີຜົນຕໍ່ການເພິ່ງພາຕົນເອງຂອງວິສາຫະກິດຊຸມຊົນແປຮູບຜະລິດຕະພັນຈາກແປ້ງເຂົ້າຫອມມະລິ ເນື່ອງຈາກວ່າການເຮັດບັນຊີລາຍຮັບ-ລາຍຈ່າຍຂອງກຸ່ມວິສາຫະກິດນັ້ນສາມາດກວດສອບໄດ້, ມີລາຍລະອຽດການໃຊ້ຈ່າຍໄວ້ຢ່າງຊັດເຈນ ແລະ ເປັນປັດຈຸບັນ ເຮັດໃຫ້ສົ່ງຜົນດີຕໍ່ການວາງແຜນທາງການເງິນ ໂດຍບໍ່ຈຳເປັນໄປກູ້ຢືມເງິນຈາກແຫຼ່ງກູ້ຢືມ ແລະ ປັດໄຈທາງດ້ານຄວາມຮູຄວາມສາມາດຂອງຜູ້ນຳ ກໍ່ມີຜົນຕໍ່ການເພິ່ງພາຕົນເອງຂອງວິສາຫະກິດຊຸມຊົນແປຮູບຜະລິດຕະພັນຈາກແປ້ງເຂົ້າຫອມມະລິ ເນື່ອງຈາກຜູ້ນຳທີ່ມີຄວາມຮູ້ຄວາມສາມາດເຮັດໃຫ້ການບໍລິການຈັດການກຸ່ມປະສົບຜົນສຳເລັດ ແລະ ຍັງສອດຄ່ອງກັບຜົນການຄົ້ນຄວ້າຂອງ HER et al. (2024) ທີ່ວ່າ: ປັດໄຈດ້ານຈຳນວນສະມາຊິກທີ່ສາມາດສ້າງລາຍຮັບ, ປັດໄຈດ້ານສະພາບແວດລ້ອມຂອງຄົວເຮືອນ, ປັດໄຈອັດຕາສ່ວນການບັນລຸການສຶກສາຂອງສະມາຊິກໃນຄົວເຮືອນ ມີຜົນເຮັດໃຫ້ຄວາມທຸກຍາກຂອງຄົວເຮືອນລຸດລົງ ຫຼື ມີຄວາມສາມາດກຸ້ມຕົນເອງທາງດ້ານເສດຖະກິດສູງຂຶ້ນນັ້ນເອງ. ສ່ວນປັດໄຈດ້ານຄ່າຄອງຊີບ ແລະ ປັດໄຈດ້ານໄພທຳມະຊາດ ແມ່ນມີຄວາມສຳພັນໄປໃນທິດທາງກົງກັນຂ້າມກັບ

ຄວາມສາມາດໃນການເພິ່ງພາຕົນເອງທາງເສດຖະກິດ ປະຊາຊົນໃນເມືອງປາກແຊງ ແຂວງຫຼວງພະບາງ ນັ້ນຄື: ເມື່ອປັດໄຈຕ່າງໆເລົ່ານີ້ມີການປ່ຽນແປງເພີ່ມຂຶ້ນ ຄວາມສາມາດໃນການເພິ່ງພາຕົນເອງທາງເສດຖະກິດ ປະຊາຊົນໃນເມືອງປາກແຊງ ແຂວງຫຼວງພະບາງ ຈະລຸດລົງ ດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.05; ເຊິ່ງສອດຄ່ອງກັບຜົນການສຶກສາຂອງ Schneider & Gugerty (2011) ທີ່ວ່າ: ດ້ານຈຳນວນສະມາຊິກຜູ້ເພິ່ງພາໃນຄອບຄົວ ແລະ ພາລະໜີ້ສິນຂອງຄອບຄົວ ຈະສົ່ງຜົນເຮັດໃຫ້ປະຊາຊົນມີຄວາມທຸກຍາກເພີ່ມຂຶ້ນ ຫຼື ຄວາມສາມາດໃນການເພິ່ງພາຕົນເອງລຸດລົງ.

## 5. ສະຫຼຸບ

ຜົນການສຶກສາພົບວ່າ ໃນປັດຈຸບັນປະຊາຊົນໃນເມືອງທຸກຍາກແຂວງຫຼວງພະບາງ ແມ່ນມີຄວາມສາມາດເພິ່ງພາຕົນເອງໄດ້ໃນບາງດ້ານເທົ່ານັ້ນ ເປັນຕົ້ນແມ່ນ: ທາງດ້ານລາຍຮັບ-ລາຍຈ່າຍ ແລະ ຊັບສິນຂອງຄອບຄົວ; ແຕ່ປະຊາຊົນຍັງຂາດຄວາມຮູ້ໃນການບໍລິຫານຈັດການ ແລະ ຍັງມີຄວາມຕ້ອງການຄວາມຊ່ວຍເຫຼືອຈາກພາກລັດໃນຫຼາຍດ້ານໆ ເຊັ່ນ: ຄວາມຮູ້ທາງດ້ານເຕັກນິກວິຊາການໃນການຜະລິດ ແລະ ຄວາມຮູ້ທາງດ້ານການເຮັດບັນຊີລາຍຮັບ-ລາຍຈ່າຍຂອງຄອບຄົວ ເຊິ່ງສົ່ງຜົນໃຫ້ປະຊາຊົນມີຄວາມສາມາດໃນການເພິ່ງພາຕົນເອງທາງເສດຖະກິດໄດ້. ສຳລັບ ປັດໄຈທີ່ມີຄວາມສຳພັນກັບຄວາມສາມາດໃນການເພິ່ງພາຕົນເອງທາງດ້ານເສດຖະກິດ ຂອງປະຊາຊົນໃນເມືອງປາກແຊງ ແຂວງຫຼວງພະບາງ ປະກອບມີ: ປັດໄຈດ້ານການອອມຂອງຄອບຄົວ, ກິດຈະກຳປູກພືດສວນຄົວ, ກິດຈະກຳລ້ຽງສັດ, ຄ່າຄອງຊີບ, ໄພທຳມະຊາດ, ຈຳນວນສະມາຊິກທີ່ສາມາດສ້າງລາຍຮັບ, ຄວາມໝັ້ນຄົງຂອງທີ່ຢູ່ອາໄສ, ລະດັບການສຶກສາສູງສຸດຂອງສະມາຊິກໃນຄອບຄົວ, ການເຮັດບັນຊີລາຍຮັບ-ລາຍຈ່າຍຂອງຄອບຄົວ, ກິດຈະກຳເກັບເຄື່ອງປ່າຂອງດົງ ແລະ ຈຳນວນສະມາຊິກໃນຄອບຄົວ ເຊິ່ງມີຄວາມສຳພັນດ້ວຍລະດັບຄວາມສຳຄັນທາງດ້ານສະຖິຕິ 0.1, 0.05 ແລະ 0.01 ຕາມລຳດັບ. ນອກຈາກນັ້ນຜົນຈາກການສຶກສາ ຍັງຊ່ວຍໃຫ້ຮູ້ໄດ້ວ່າການສົ່ງເສີມການສ້າງອາຊີບເສີມໃຫ້ກັບສະມາຊິກໃນຄອບຄົວ ແລະ ການເຮັດກິດຈະກຳປູກພືດສວນຄົວ ເປັນສິ່ງທີ່ກໍ່ໃຫ້ເກີດລາຍໄດ້ ດັ່ງນັ້ນອົງການຈັດຕັ້ງທີ່ກ່ຽວຂ້ອງຄວນມີແນວທາງການສົ່ງເສີມອາຊີບເສີມ ແລະ ສົ່ງເສີມການສ້າງກິດຈະກຳປູກພືດສວນຄົວ ທີ່ເໝາະສົມກັບສະພາບຄວາມເປັນຈິງຂອງແຕ່ລະທ້ອງຖິ່ນ ແລະ ຄວາມຕ້ອງການຂອງປະຊາຊົນ. ແນວໃດກໍ່ຕາມ ການສຶກສາຄັ້ງນີ້ເປັນການສຶກສາສະເພາະຄວາມສາມາດໃນການເພິ່ງພາທາງດ້ານເສດຖະກິດພຽງດ້ານດຽວເທົ່ານັ້ນ; ດັ່ງນັ້ນໃນການສຶກສາຄັ້ງຕໍ່ໄປ ຄວນມີການສຶກສາຄວາມສາມາດໃນການເພິ່ງພາຕົນເອງໃນດ້ານທີ່ເຫຼືອ ເຊັ່ນ: ການເພິ່ງພາຕົນເອງທາງດ້ານຈິດໃຈ, ການເພິ່ງພາຕົນເອງທາງດ້ານຊັບພະຍາກອນທຳມະຊາດ, ການເພິ່ງພາຕົນເອງທາງດ້ານເທັກໂນໂລຊີ ແລະ ການເພິ່ງພາຕົນເອງທາງດ້ານສັງຄົມ ເນື່ອງຈາກໃນແຕ່ລະພື້ນລ້ອນແຕ່ມີສະພາບລວມທີ່ແຕກຕ່າງກັນທາງດ້ານພື້ນທີ່, ປະຊາກອນ, ສັງຄົມ ແລະ ວັດທະນະທຳ, ປະເພນີ ແລະ ສິ່ງແວດລ້ອມ.

## 6. ຂໍ້ຂັດແຍ່ງ

ຂ້າພະເຈົ້າໃນນາມຜູ້ຄົ້ນຄວ້າວິທະຍາສາດ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ ແມ່ນບໍ່ມີຂໍ້ຂັດແຍ່ງທາງຜົນປະໂຫຍດກັບພາກສ່ວນໃດ ແລະ ບໍ່ໄດ້ເອື້ອປະໂຫຍດໃຫ້ກັບພາກສ່ວນໃດພາກສ່ວນໜຶ່ງ, ກໍລະນີມີການລະເມີດ ໃນຮູບການໃດໜຶ່ງ ຂ້າພະເຈົ້າມີຄວາມຍິນດີ ທີ່ຈະຮັບຜິດຊອບແຕ່ພຽງຜູ້ດຽວ.

## 7. ເອກະສານອ້າງອີງ


Administration Office of Pakxeng. (2024). Socio-economic development plan 2020–2024. Pakxeng District Administration Office.

Chanhtanguen, C., Siphanthong, B., Sioudomphan, S., & Sengdara, C. (2023). Analysis of the relationship between income structure and household income distribution of the people in Namor District, Oudomxay Province. *Souphanouvong University Journal of Multidisciplinary Research and Development*, *9*(2), 83–92.

Chansong, S. (2020). Communication for development of potential for self-reliance and promotion of occupations for the community: A case study of Ban Mae Thalu, Sop Moei District, Mae Hong Son Province. *Journal of Community Development and Quality of Life*, *8*(2), 414–427. DOI: 10.2478/scr-2013-0016

Government of the Lao PDR. (2024). Decree on the Transformation of Academic Units into Autonomous Bodies. Government of the Lao PDR. pp. 1-23

Her, B., Siphanthong, B., & Sioudomphan, S. (2024). Factors affecting changes in the household poverty index in Phonxay District, Luang Prabang Province. *Souphanouvong University Journal of Multidisciplinary Research and Development*, *10*(2), 133–144.

Katasomboon, H. (2021). *Driving the sufficiency economy in the sustainable economic development of the community foundation economy: A case study of Ban Noentan, Moo 6, Tambon Sueahoke,*

*Amphoe Mueang, Chai Nat. Journal of Buddhist Anthropology*, *6*(7), 270–286. Retrieved from https://so04.tci-thaijo.org/index.php/JSBA/article/view/251105

Knecht, A. (2012). Understanding and Fighting Poverty – Amartya Sen's Capability Approach and Related Theories. *Social Change Review, Winter 2012 ▪ Vol. 10*(2): 153-176

Natsupa, C. (2001). *A study of Thailand–Laos relations through the perspectives of Wat Sisaket in Vientiane and the Temple of the Emerald Buddha in Rattanakosin* (Unpublished master's thesis). Silpakorn University.

Phon-ngam, P., Srisawa, S., & Noomak, S. (2018). Development of economic self-reliance potential for Ban Na Bond community, Loei Province. *Area-Based Development Research Journal*, *10*(1), 59–69.

Sanyamo, K. (2023). Economic self-reliance of the community in Sean Pan Sub-district, That Phanom District, Nakhon Phanom Province. *MCU Journal of Social Development*, *9*(1), 298–321.

Sanyawiwat, S. (1998). Economic Self-Reliance of Thai Rural Societies: Social and Cultural Factors. *Journal of Social Sciences*: Vol. 25: Iss. 1, Article 5. Available at: https://digital.car.chula.ac.th/cujss/vol25/iss1/5

Schneider, K., & Gugerty, M. (2011). Agricultural productivity and poverty reduction: Linkages and pathways. *The Evans School Review*, *1*(1), 69–92.

Sen, A. (1999). Development as Freedom. Oxford University Press.

Sriwiboon, S., & Virunannont, P. (2013). Self-reliance strategy to fight against poverty: A comparison between two communities with different mindsets. *Journal of Social Research and Review*, *36*(1), 49–74. https://so04.tci-thaijo.org/index.php/socialresearchjournal/article/view/83930

Yamane, T. (1973). *Statistics: an introductory analysis.* New York: New York: Harper & Row

Watanabe, O., Chompikul, J., Mongkolchati, A., & Pimpisan, N. (2014). Performances of village health volunteers in elderly care in Muang District, Nakhon Ratchasima Province, Thailand. *Journal of Public Health and Development, 12*(2), 3–17.

Wongphang, W., Yooprasert, P., & Krutmuangsanserm, S. (2019). Self-reliance and factors related to successful management of Khao Hom Mali products in community enterprises in Roi Et Province. *Khon Kaen Agricultural Journal*, *47*(1), 1079–1088.

Yansombat, N. (2021). Developing economic self-reliance and occupation promotion of Ban Maharaj community, Maharaj District, Ayutthaya Province. *Journal of MCU Social Science Review*, *10*(2), 172–184.

ຕາຕະລາງ 1: ຜົນການທົດສອບປັດໄຈທີ່ມີຄວາມສຳພັນກັບຄວາມສາມາດເພິ່ງພາຕົນເອງທາງເສດຖະກິດ ຂອງປະຊາຊົນ ເມືອງປາກແຊງ ແຂວງຫຼວງພະບາງ.

| ປັດປັດໄຈທີ່ສົ່ງຜົນ | ລະດັບ ອິດສະຫຼະ df | ສະຖິຕິທົດສອບ Pearson Chi-Square | ຄ່າລະດັບຄວາມສຳຄັນ Sig. |
|---|---|---|---|
| ຈຳນວນສະມາຊິກໃນຄອບຄົວ | 9 | 15.575* | 0.076 |
| ຈຳນວນສະມາຊິກຜູ້ເພິ່ງພາ | 7 | 10.327 | 0.171 |
| ຈຳນວນສະມາຊິກທີ່ສາມາດສ້າງລາຍຮັບ | 7 | 15.843** | 0.027 |
| ຄວາມໝັ້ນຄົງຂອງທີ່ຢູ່ອາໄສ | 1 | 5.764** | 0.016 |

| | | | |
|---|---|---|---|
| ລາຍຮັບຂອງຄອບຄົວ | 1 | 0.727 | 0.394 |
| ລາຍຈ່າຍຂອງຄອບຄົວ | 1 | 1.415 | 0.234 |
| ຊັບສິນຂອງຄອບຄົວ | 1 | 0.441 | 0.507 |
| ໜີ້ສິນຂອງຄອບຄົວ | 3 | 3.407 | 0.333 |
| ການອອມຂອງຄອບຄົວ | 1 | 10.957*** | 0.001 |
| ລະດັບການສຶກສາສູງສຸດຂອງຫົວໜ້າຄອບຄົວ | 5 | 3.306 | 0.653 |
| ລະດັບການສຶກສາສູງສຸດຂອງສະມາຊິກໃນຄອບຄົວ | 5 | 12.018** | 0.035 |
| ການເຮັດບັນຊີລາຍຮັບ-ລາຍຈ່າຍຂອງຄອບຄົວ | 1 | 6.197** | 0.013 |
| ກິດຈະກຳສົ່ງເສີມອາຊີບ | 1 | 0.062 | 0.803 |
| ກິດຈະກຳປູກພືດສວນຄົວ | 1 | 8.541*** | 0.003 |
| ກິດຈະກຳລ້ຽງສັດ | 1 | 7.519*** | 0.006 |
| ກິດຈະກຳເກັບເຄື່ອງປ່າຂອງດົງ | 1 | 5.126** | 0.024 |
| ຄ່າຄອງຊີບ | 1 | 22.259*** | 0.000 |
| ໄພທຳມະຊາດ | 1 | 19.213*** | 0.000 |

ແຫຼ່ງທີ່ມາ: ຈາກການວິເຄາະພົນດ້ວຍໂປຣແກມວິເຄາະຂໍ້ມູນທາງສະຖິຕິ.